# ມະໂຍບາຍຕ້ານການແບ່ງແຍກເຊື້ອຊາດ

ພໍ່ແມ່ ແລະ ຜູ້ດູແລ ທີ່ ຮັກແພງ

ກະຊວງສຶກສາປະຕິເສດທຸກຮູບແບບຂອງການແບ່ງແຍກເຊື້ອຊາດແລະມຸ່ງໝັ້ນທີ່ຈະກໍາຈັດການແບ່ງແຍກເຊື້ອຊາດທຸກຮູບແບບທີ່ມີຢູ່ໃນໂຮງຮຽນຫຼວງ ຂອງ ຣັດ NSW. ນະໂຍບາຍ Anti-Racism Policy (ນະໂຍບາຍຕ້ານການຈໍາແນກເຊື້ອຊາດ) ຂອງກະຊວງມີຈຸດປະສົງເພື່ອໃຫ້ແນ່ໃຈວ່າບໍ່ມີນັກຮຽນ,ພະນັກງານ, ພໍ່ແມ່, ຜູ້ດູແລ ຫຼື ສະມາຊິກຊຸມຊົນປະສົບກັບການແບ່ງແຍກເຊື້ອຊາດພາຍໃນສະພາບແວດລ້ອມຂອງໂຮງຮຽນ.

ນະໂຍບາຍຮຽກຮ້ອງໃຫ້ສະມາຊິກທັງໝົດຂອງຊຸມຊົນໂຮງຮຽນຊ່ວຍຕ້ານການແບ່ງແຍກເຊື້ອຊາດໂດຍການສະແດງຄວາມເຄົາລົບຕໍ່ພູມຫຼັງທາງວັດທະ ນະທໍາ, ພາສາ ແລະ ສາດສະໜາ ຂອງຄົນອື່ນ, ແລະ ດ້ວຍປະພຶດຕິກັມທີ່ສົ່ງເສີມການຍອມຮັບ ແລະ ສາມັກຄີກົມກຽວໃນສະພາບແວດລ້ອມໂຮງຮຽນ.

ແຕ່ລະໂຮງຮຽນມີເຈົ້າຫນ້າທີ່ຕິດຕໍ່ດ້ານ ຕ້ານການແບ່ງແຍກເຊື້ອຊາດ (Anti-Racism Contact Officer (ARCO)) ທີ່ໄດ້ຮັບການຝຶກອົບຮົມເພື່ອຊ່ວຍຕ້ານການແບ່ງແຍກເຊື້ອຊາດ ແລະ ສະໜັບ ສະໜູນຊຸມຊົນໂຮງຮຽນໃນເວລາທີ່ມີການຮ້ອງຮຽນກ່ຽວກັບການແບ່ງແຍກເຊື້ອຊາດໃນໂຮງຮຽນ. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍແລະບົດບາດຂອງ ARCO ໃຫ້ເບິ່ງ Anti-Racism Policy - Information for parents and carers (ນະໂຍບາຍຕ້ານການແບ່ງແຍກເຊື້ອຊາດ - ຂໍ້ມູນສໍາລັບພໍ່ແມ່ແລະຜູ້ດູແລ).

ຂໍຂອບໃຈທີ່ທ່ານຊ່ວຍເຫຼືອພວກເຮົາໃນການຮັກສາສະພາບແວດລ້ອມຂອງໂຮງຮຽນໃນທາງບວກທີ່ປະຕິເສດການແບ່ງແຍກເຊື້ອຊາດໃນທຸກຮູບແບບ. ກະລຸນາຕິດຕໍ່ຂ້າພະເຈົ້າຖ້າທ່ານຫຼືລູກຂອງທ່ານປະສົບກັບການແບ່ງແຍກເຊື້ອຊາດບໍ່ວ່າໃນຮູບແບບໃດ, ເຫັນໃຜກໍຕາມທີ່ປະສົບກັບການແບ່ງແຍກເຊື້ອຊາດຢູ່ໃນໂຮງຮຽນຂອງພວກເຮົາ, ຫຼື ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ຫຼື ການສະໜັບສະໜູນ.

ດ້ວຍຄວາມນັບຖື

ທ່ານຄູໃຫຍ່

## ການຊ່ວຍດ້ານນາຍພາສາ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ແລະ ທ່ານຕ້ອງ ການນາຍພາສາເພື່ອຊ່ວຍທ່ານໃນການຕິດຕໍ່ໂຮງຮຽນ ຫຼື ທ່ານຄູໃຫຍ່, ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ທີ່ເບີ 131 450 ແລະ ຂໍເອົານາຍພາສາເປັນພາສາຂອງທ່ານ.

ບອກຜູ້ຮັບສາຍເບີໂທລະສັບຂອງໂຮງຮຽນແລະຜູ້ຮັບສາຍກໍຈະຕິດຕໍ່ໄປຫາໂຮງຮຽນ ແລະ ຊອກເອົາ ນາຍພາສາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ.

ທ່ານຈະບໍ່ຖືກເກັບຄ່າບໍລິການແປພາສາ.